ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

2050----

ກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ........../ກບຮ.

ກົມບໍ່ແຮ່ ນະຄອນຫຼວງວຽງຈັນ, ວັນທີ 24 OCT 2013

## ແຈ້ງການ:

**ເຖິງ:** ທ່ານ ຜູ້ອໍານວຍການບໍລິສັດລົງທຶນດ້ານບໍ່ແຮ່ ໃນ ສປປ ລາວ.

**ເລື່ອງ:** ຂັ້ນຕອນການອອກອະນຸຍາດການສົ່ງອອກແຮ່ສໍາເລັດຮູບ ແລະ ເຄິ່ງສໍາເລັດຮູບ ເພື່ອສົ່ງອອກໄປຈໍາໜ່າຍຢູ່ພາຍໃນ ແລະ ຕ່າງປະເທດ.

- ອີງຕາມກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 02/ສພຊ, ລົງວັນທີ 20/12/2011.
- ອີງຕາມຂໍ້ຕົກລົງວ່າດ້ວຍ ລະບຽບການຂໍອະນຸຍາດນໍາເຂົ້າ ແລະ ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ສະບັບເລກທີ 0352/ພບ, ລົງວັນທີ 13/3/2012.
- ອີງຕາມຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ສະບັບເລກທີ 0481/ພບ, ລົງວັນທີ 20/04/2012.

ກົມບໍ່ແຮ່, ຂໍແຈ້ງມາຍັງ ຜູ້ລົງທຶນດ້ານບໍ່ແຮ່ໃນຂອບເຂດທົ່ວປະເທດ ຊາບວ່າ: ເພື່ອສະດວກໃຫ້ແກ່ວຽກງານຄຸ້ມຄອງຕິດຕາມກວດກາ ໃນການຜະລິດ-ຈໍາໜ່າຍ ແລະ ການປະຕິບັດພັນທະດ້ານການເງິນຕໍ່ລັດຖະບານ; ກົມບໍ່ແຮ່ ຈຶ່ງສະເໜີໃຫ້ຜູ້ລົງທຶນປະກອບເອກະສານ ໃນການພິຈາລະນາອະນຸມັດການສົ່ງອອກແຕ່ລະຄັ້ງ ມີລາຍລະອຽດດັ່ງລຸ່ມນີ້:

1. ໃບຄໍາຮ້ອງ ຫຼື ໃບສະເໜີ.
2. ສັນຍາສໍາປະທານທີ່ເຊັນກັບ ລັດຖະບານ ແຫ່ງ ສປປ ລາວ.
3. ໃບອະນຸຍາດລົງທຶນພາຍໃນ ຫຼື ຕ່າງປະເທດ.
4. ໃບທະບຽນສໍາປະທານ.
5. ໃບທະບຽນວິສາຫະກິດ.
6. ໃບອະນຸຍາດຂຸດຄົ້ນ.
7. ໃບອະນຸຍາດດໍາເນີນໂຮງງານ.
8. ໃບຢັ້ງຢືນການມອບພັນທະອາກອນ ພ້ອມໃບບິນການຊໍາລະ.
9. ສັນຍາຊື້-ຂາຍ ແຮ່ທາດ ລູກຄ້າ.
10. ຜົນວິໄຈແຮ່ທາດ ຂອງບໍລິສັດ, ຜູ້ຊື້ ແລະ ຜົນວິໄຈຂອງລັດຖະບານ.
11. ແຜນວາດໂຮງງານການຜະລິດແຮ່ທາດ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ປະຕິບັດຕາມນີ້ດ້ວຍ.

ຫົວໜ້າກົມບໍ່ແຮ່.

ກະຊວງພະລັງງານ ແລະ ບໍ່ແຮ່

ດຣ. ສີມອນ ພິຈິດ

ກົມບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່. ໂທ: 021 415123, ແຟັກ: 021 413015, E-mail: dom_reports@yahoo.com